ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ບໍລິສັດ ຊີມັງລາວ ມະຫາຊົນ
LAO CEMENT PUBLIC COMPANY

ຖະໜົນ ໜອງບອນ ວຽງຈັນ, ສ. ປ. ປ. ລາວ ຕູ້ ປ.ນ 6821, ໂທຣ: (856-21) 412111, 451116 ແຟັກ: 263120, 451222
NONGBONE RD, VIENTIANE, LAO P.D.R P.O.BOX 6821, TEL: (856-21) 412111, 451116 FAX: 263120, 451222
E-mail: Lcc@laocement.com, www.laocement.com

ເລກທີ 133 /ບຊລ - - -

ນະຄອນຫຼວງວຽງຈັນ, ວັນທີ 30 APR 2018

ຮຽນ : ທ່ານ ຫົວໜ້າສໍານັກງານຄະນະກໍາມະການຄຸ້ມຄອງຫຼັກຊັບ ທີ່ນັບຖື;

ທ່ານ ຜູ້ອໍານວຍການໃຫ່ຍ ຕະຫຼາດຫຼັກຊັບລາວ ທີ່ນັບຖື;

ທ່ານ ຜູ້ຖືຮຸ້ນ ບໍລິສັດ ຊີມັງລາວ ມະຫາຊົນ ທີ່ນັບຖື,

ເລື່ອງ : ແຈ້ງມະຕິທີ່ສໍາຄັນຂອງກອງປະຊຸມສະພາບໍລິຫານ ຄັ້ງທີ 1 ປະຈໍາປີ 2018

- ອີງຕາມກົດລະບຽບຂອງ ສຄຄຊ ວ່າດວ້ຍ: ລະບຽບການລາຍງານ ແລະ ການເປີດເຜີຍຂໍ້ມູນ ສະບັບ ເລກທີ 007/ສສຄ ລົງວັນທີ 3 ເມສາ ປີ 2014,
- ອີງຕາມລະບຽບຂອງຕະຫຼາດຫຼັກຊັບລາວວ່າດວ້ຍການເປີດເຜີຍຂໍ້ມູນ ສະບັບເລກທີ 22/LSX, ລົງວັນ ທີ 07 ມັງກອນ 2011.

ບໍລິສັດ ຊີມັງລາວ ມະຫາຊົນ (ບຊລ) ຂໍຖືເປັນກຽດແຈ້ງມະຕິທີ່ສໍາຄັນ ຂອງກອງປະຊຸມສະພາບໍລິຫານ ຄັ້ງທີ 01 ປະຈໍາປີ 2018 ວັນທີ 30 ເມສາ 2018 ເຊິ່ງມີລາຍລະອຽດດັ່ງລຸ່ມນີ້ :

1. ພິຈາລະນາ ແລະ ຮັບຮອງບົດລາຍງານການເຄື່ອນໄຫວທຸລະກິດປະຈໍາປີ 2017;
2. ພິຈາລະນາ ແລະ ຮັບຮອງເອກະສານລາຍງານການເງິນປະຈໍາປີ 2017;
3. ພິຈາລະນາ ແລະ ຮັບຮອງການອະນຸມັດຈ່າຍເງິນປັນຜົນ ຂອງ ບຊລ ປີ 2017 ເພື່ອນໍາສະເໜີຕໍ່ກອງປະຊຸມຜູ້ຖືຮຸ້ນພິຈາລະນາ ແລະ ຮັບຮອງ;
4. ພິຈາລະນາ ແລະ ຮັບຮອງມື້ປິດປຶ້ມເພື່ອກໍານົດສິດຜູ້ເຂົ້າຮ່ວມກອງປະຊຸມຜູ້ຖືຮຸ້ນປະຈໍາປີ 2017 ໃນວັນທີ 14 ພຶດສະພາ 2018 ແລະ ມື້ເປີດກອງປະຊຸມຜູ້ຖືຮຸ້ນ ໃນວັນທີ 31 ພຶດສະພາ 2018;
5. ພິຈາລະນາ ແລະ ຮັບຮອງແຜນດໍາເນີນທຸລະກິດ ແລະ ແຜນງົບປະມານການເງິນປະຈໍາປີ 2018;
6. ເຫັນດີສະເໜີການແຕ່ງຕັ້ງບໍລິສັດກວດສອບບັນຊີ EY ແຕ່ປີ 2018-2020 ແລະ ສະເໜີຕໍ່ກອງປະຊຸມຜູ້ຖືຮຸ້ນ ພິຈາລະນາຮັບຮອງ;

7. ພິຈາລະນາ ແລະ ຮັບຮອງວາລະກອງປະຊຸມຜູ້ຖືຮຸ້ນ ປະຈຳປີ 2017 ເຊິ່ງມີລາຍລະອຽດດັ່ງນີ້:

ວາລະທີ 1 : ຮັບຊາບບົດລາຍງານວຽກງານການດຳເນີນທຸລະກິດປະຈຳປີ 2017;

ວາລະທີ 2 : ພິຈາລະນາ ແລະ ຮັບຮອງເອກະສານລາຍງານການເງິນປີ 2017;

ວາລະທີ 3 : ພິຈາລະນາ ແລະ ຮັບຮອງການອະນຸມັດຈ່າຍເງິນປັນຜົນປີ 2017;

ວາລະທີ 4 : ພິຈາລະນາ ແລະ ຮັບຮອງແຜນດຳເນີນທຸລະກິດ ແລະ ແຜນງົບປະມານການເງິນປະຈຳປີ 2018;

ວາລະທີ 5 : ພິຈາລະນາ ແລະ ຮັບຮອງການແຕ່ງຕັ້ງບໍລິສັດກວດສອບບັນຊີ EY ແຕ່ປີ 2018-2020.

ດັ່ງນັ້ນ, ຈຶ່ງຮຽນມາເພື່ອຊາບ ແລະໃຊ້ຕາງລາຍງານ,

ດ້ວຍຄວາມນັບຖືຢ່າງສູງ,

ບໍລິສັດ ຊິມັງລາວ ມະຫາຊົນ

ປະທານສະພາບໍລິຫານ

ຫຼີວເຫວີຍ